เป็นหยังจึ่งต้องเຊື່ອພຣະເຢຊູ?

ວິທີປົດປ່ອຍຕົນເອງຈາກບາບກັມ

ພຣະບັນຍັດ (ສິນ) ຂໍ້ໃຫຍ່
ແລະສຳຄັນຂອງພຣະເຢຊູ
ທີ່ມອບໃຫ້
ທຸກຄົນທີ່ເຊື່ອພຣະອົງ

# ຫລັກຄວາມເຊື່ອ
# ຂອງ
# ຊາວຄຣິສຕຽນ

# ໂຄງຮ່າງ

## I. ເປັນຫຍັງຈຶ່ງຕ້ອງເຊື່ອພຣະເຢຊູ?

1. **ຍ້ອນເຮົາເຊື່ອວ່າ** ມະນຸດເຮົາມີຊີວິດຫລັງຄວາມຕາຍ
2. **ຍ້ອນເຮົາເຊື່ອວ່າ** ມະນຸດທຸກຄົນລ້ວນແຕ່ມີບາບກັມ ແລະຍ້ອນບາບກັມນີ້ເອງທີ່ເຮັດໃຫ້ມະນຸດທຸກຄົນຕ້ອງຕາຍ ມະນຸດທຸກຄົນຈະໜີບໍ່ພົ້ນຄວາມຕາຍ. ໂຣມ 6:23
3. **ຍ້ອນວ່າພຣະເຈົ້າຊົງຮັກມະນຸດ** ແລະມີແຜນການໄຖ່ບາບກັມນັ້ນໃຫ້ແກ່ມະນຸດ ເພື່ອໃຫ້ມະນຸດຫລຸດພົ້ນຈາກບາບກັມຂອງຕົນເອງ. ໂຢຮັນ 3:16

## II. ວິທີປົດປ່ອຍຕົນເອງອອກຈາກບາບກັມ

1. **ຕ້ອງຍອມຮັບວ່າ** ຕົນເອງເປັນຄົນມີບາບມີກັມ ແລະບໍ່ສາມາດປົດປ່ອຍຕົນເອງອອກຈາກສິ່ງນີ້ໄດ້ດ້ວຍຕົນເອງ
2. **ຕ້ອງຍອມຮັບເອົາ**ແຜນການໄຖ່ບາບກັມທີ່ພຣະເຈົ້າມອບໃຫ້ຈຶ່ງຈະສາມາດຫລຸດພົ້ນຈາກບາບກັມນີ້ໄປໄດ້.
3. **ຕ້ອງພາວະນາອະທິຖານ**ຕໍ່ພຣະເຈົ້າດ້ວຍຄວາມເຊື່ອ ແລະຂໍໃຫ້ພຣະອົງຊົງປົດປ່ອຍທ່ານອອກຈາກບາບກັມ.
4. **ໃຫ້ເບິ່ງຕົວຢ່າງການພາວະນາອະ**ທິຖານເພື່ອຂໍການໄຖ່ໃຫ້ພົ້ນຈາກບາບກັມຊຶ່ງນຳມາສເນີໃນເຈັ້ຽແຜ່ນນີ້.

## III. ພຣະບັນຍັດ (ສິນ) ຂໍ້ໃຫຍ່ແລະສຳຄັນທີ່ພຣະເຢຊູ ມອບໃຫ້ທຸກຄົນທີ່ເຊື່ອໃຫ້ປະຕິບັດ.

1. **ໃຫ້ຮັກພຣະເຈົ້າ**ດ້ວຍສຸດຈິດ ດ້ວຍສຸດໃຈ
2. **ໃຫ້ຮັກເພື່ອນບ້ານ**ເໝືອນຮັກຕົນເອງ
3. **ທຸກຄົນທີ່ເຊື່ອ** ໃຫ້ຮັກຊຶ່ງກັນແລະກັນ

# ອະທິບາຍກ່ຽວກັບຫົວຂໍ້ໂຄງຮ່າງ

## I. ເປັນຫຍັງຈຶ່ງຕ້ອງເຊື່ອພຣະເຢຊູ

1. **ເຮົາເຊື່ອວ່າ** ຊີວິດຂອງມະນຸດເຮົາ ຈະບໍ່ສິ້ນສຸດພຽງຄວາມຕາຍເທົ່ານັ້ນ, ແຕ່ມະນຸດມີວິນຍານທີ່ຕາຍບໍ່ເປັນ ຊຶ່ງເອີ້ນວ່າເປັນຊີວິດແທ້ທີ່ອາສັຍຢູ່ໃນຮ່າງກາຍນັ້ນ. ຫລັງຈາກຮ່າງກາຍຕາຍຈາກໂລກນີ້ໄປ ວິນຍານທີ່ອາສັຍຢູ່ໃນຮ່າງກາຍນັ້ນຈະມີສອງບ່ອນທີ່ຈະໄປ ແລະວິນຍານນີ້ເຮົາຈະບໍ່ເອີ້ນວ່າຜີປີສາດ ເພາະຄຳວ່າຜີປີສາດນີ້ໝາຍເຖິງຜີມານຊາຕານກັບບໍຣິວານຂອງມັນ. ຊີວິດແທ້ຂອງມະນຸດຄືວິນຍານ ແລະມີສອງບ່ອນທີ່ຈະໄປຫລັງຈາກຕາຍຄື:

ກ. ໄປສູ່ແດນມໍຣະນາ ຫລືເອີ້ນຢ່າງນຶ່ງວ່າ "ໄປເມືອງຜີ" ຫາກວິນຍານນັ້ນຍັງບໍ່ໄດ້ຮັບການໄຖ່ໃຫ້ພົ້ນຈາກບາບກັມເທື່ອ. ເວົ້າງ່າຍໆກໍຄືວ່າ ລາວຕ້ອງໄປໃຊ້ໜີ້ບາບກັມຂອງລາວທີ່ໄດ້ກະທຳໄວ້ໃນເວລາມີຊີວິດຢູ່.

ຂ. ວິນຍານໄປສູ່ແດນບໍຣົມມະສຸກກະເສີມ ຫລືເອີ້ນວ່າ "ສວັນ" ຊຶ່ງເປັນແຜ່ນດິນຂອງພຣະເຈົ້າ ຖ້າຫາກວິນຍານຂອງບຸກຄົນຜູ້ນັ້ນໄດ້ຮັບການໄຖ່ໃຫ້ພົ້ນຈາກບາບກັມທຸກຢ່າງແລ້ວ. ຄືຜູ້ກ່ຽວໄດ້ຮັບເອົາການຊົງໄຖ່ຈາກພຣະເຈົ້າໃນເວລາຍັງມີຊີວິດຢູ່.

2. **ເຮົາເຊື່ອວ່າ**ມະນຸດທຸກຄົນລ້ວນແຕ່ເປັນຄົນມີບາບກັມຕິດຕົວມາແຕ່ກຳເນີດ ແລະບາບກັມນີ້ຕ້ອງນຳເຮົາໄປສູ່ແດນມໍຣະນາຫລືເອີ້ນວ່ານາຣົກອະເວຈີ (ໂຣມ 6:23) ແຕ່ຍ້ອນພຣະເຈົ້າຊົງຮັກມະນຸດ ຈຶ່ງຊົງມີແຜນການໄຖ່ບາບກັມຂອງມະນຸດໂດຍການຍອມລົງມາເກີດ ແລ້ວຍອມສະຣະຊີວິດຂອງຕົນເອງຕາຍເປັນເຄື່ອງບູຊາໄຖ່ບາບໃຫ້ແກ່ມະນຸດ. ດັ່ງນັ້ນ ເຮົາຈະໄດ້ຮັບການໄຖ່ຈາກບາບກັມຂອງເຮົາຫາກເຮົາຍອມຮັບເອົາເຄື່ອງບູຊາຂອງພຣະອົງ ຄືຍອມຮັບໃຫ້ພຣະອົງຕາຍແທນ ແລະເຊື່ອໃນການໄຖ່ຂອງພຣະອົງນັ້ນ.

## II. ວິທີທີ່ຈະໄດ້ຮັບການໄຖ່ຈາກບາບກັມ

1. **ຕ້ອງຍອມຮັບວ່າ**ຕົນເອງເປັນຄົນມີບາບມີກັມ ຍ້ອນບາບກັມນີ້ ມະນຸດຈຶ່ງມີເກີດ ແກ່ ເຈັບ ຕາຍ. ຕ້ອງຍອມສາຣະພາບບາບກັມຂອງຕົນ ແລະມອບໃຫ້ແກ່ພຣະເຈົ້າ ແລະຍິນດີໃຫ້ພຣະອົງຊໍາຣະລ້າງໃຫ້ເຮົາ ເພາະພຣະອົງຊົງສັນຍາດັ່ງນັ້ນແກ່ເຮົາ (1 ໂຢຮັນ 1:9)

2. ຕ້ອງຍອມຮັບເອົາແຜນການໄຖ່ບາບກັມຂອງພຣະເຈົ້າມາເປັນຂອງຕົນເອງໂດຍທາງຄວາມເຊື່ອ ຊຶ່ງໝາຍເຖິງ:

- ເຊື່ອວ່າການຕາຍຂອງພຣະເຢຊູຄຣິສ ເປັນເຄື່ອງໄຖ່ບາບກັມຂອງຕົນ. ຄືພຣະຄຣິສຊົງຕາຍເພື່ອໄຖ່ບາບໃຫ້ແກ່ທ່ານ.
- ເຊື່ອວ່າຫາກເຊື້ອເຊີນໃຫ້ພຣະອົງມາສະຖິດຢູ່ໃນຈິດໃຈແລ້ວ ຕົນເອງກໍຈະໄດ້ພົ້ນຈາກບາບກັມນັ້ນແນ່ນອນ.

3. **ພຽງແຕ່ຮູ້ຈັກວິທີຂອງການ**ໄຖ່ບາບກັມນັ້ນ ຍັງບໍ່ພຽງພໍ ເຮົາຕ້ອງຍອມຮັບເອົາການໄຖ່ນັ້ນມາເປັນຂອງຕົນເອງຢ່າງແທ້ຈິງ ໂດຍການພາວະນາອະທິຖານດ້ວຍຄວາມເຊື່ອດັ່ງນີ້:

<u>ຕົວຢ່າງການພາວະນາອະທິຖານ</u>:

1. ຂ້າແດ່ອົງພຣະເຢຊູຄຣິສ
2. ຂ້ານ້ອຍຍອມຮັບວ່າຕົນເອງມີບາບມີກັມແທ້ຈິງ
3. ຂ້ານ້ອຍຂໍຍອມສາຣະພາບມອບບາບກັມນີ້ໃຫ້ພຣະອົງຊໍາຣະລ້າງໃຫ້ດ້ວຍ
4. ຂ້ານ້ອຍຂໍຂອບພຣະຄຸນທີ່ພຣະອົງຊົງຊໍາຣະບາບກັມໃຫ້ແກ້ຂ້ານ້ອຍຕາມທີ່ຊົງສັນຍາໄວ້
5. ບັດນີ້ຂ້ານ້ອຍຂໍເຊື້ອເຊີນພຣະອົງໃຫ້ມາສະຖິດຢູ່ໃນຊີວິດຈິດໃຈຂອງຂ້ານ້ອຍຕລອດໄປ
6. ຂ້ານ້ອຍຂໍພຣະອົງຊົງຊ່ອຍໃຫ້ຂ້ານ້ອຍດໍາຣົງຊີວິດຢູ່ໃນຄວາມຊອບທັມ ຕາມນໍ້າພຣະທັຍຂອງພຣະອົງດ້ວຍເຖີດ.
7. ອາແມນ

(“ອາແມນ” ແປວ່າ ສາທຸ ຫລື ຂໍໃຫ້ເປັນຈິງດ້ວຍເຖີດ)

## III. ພຣະບັນຍັດ (ສິນ) ຂໍ້ໃຫຍ່ແລະສໍາຄັນທີ່ພຣະເຢຊູມອບໃຫ້ທຸກຄົນທີ່ເຊື່ອນໍາໄປປະຕິບັດ.

1. **ຮັກພຣະເຈົ້າ ດ້ວຍສຸດຈິດ ດ້ວຍດ້ວຍສຸດໃຈ**

ກ. ມີຄວາມປາຖນາທີ່ຈະໄປຢູ່ກັບພຣະອົງ ຄືປາຖນາຈະໄດ້ຊີວິດນິຣັນກັບພຣະອົງຫລັງຈາກຕາຍ ສິ່ງດັ່ງກ່າວນີ້ເຮົາຈະໄດ້ ຫາກເຮົາຖືກໄຖ່ໃຫ້ພົ້ນຈາກບາບກັມແລ້ວ.

ຂ. ຍິນດີຮຽນຮູ້ ແລະປະຕິບັດຕາມຄໍາສັ່ງຂອງພຣະອົງ ຄືການຂາບໄຫວ້ນະມັສການພຣະອົງ ແລະເຂົ້າໃກ້ຊິດກັບພຣະອົງຕລອດເວລາ.

2. **ຮັກເພື່ອນບ້ານເໝືອນຮັກຕົນເອງ**

ກ. ແບ່ງປັນສິ່ງດີໆ ແລະສິ່ງປະເສີດໃຫ້ແກ່ຄົນອື່ນ. ອັນໃດທີ່ເຮົາຖືວ່າດີ ແລະປະເສີດສໍາຣັບເຮົາ ກໍຄວນແບ່ງປັນໃຫ້ຄົນອື່ນດ້ວຍ. ຍ້ອນເຫດນີ້ຊາວຄຣິສຕຽນຈຶ່ງມັກເວົ້າເລື້ອງຂ່າວປະເສີດແລະການໄຖ່ໃຫ້ພົ້ນຈາກບາບກັມນີ້ໃຫ້ແກ່ຄົນອື່ນຟັງ ເພື່ອສະແດງຄວາມຮັກຕໍ່ຜູ້ອື່ນແລະຢາກໃຫ້ຜູ້ອື່ນໄດ້ຮັບການໄຖ່ໃຫ້ພົ້ນຈາກບາບກັມເໝືອນກັບຕົນເອງ ໂດຍການຍອມຮັບເອົາແຜນການໄຖ່ຈາກພຣະເຈົ້າ.

ຂ. ສິ່ງດີອື່ນໆ ເຊັ່ນ ວັດຖຸ ເງິນຄໍາ ຄວາມສາມາດ ແລະອື່ນໆກໍບໍ່ຄວນສະສົມໄວ້ຕົນເອງແຕ່ຜູ້ດຽວ ຕ້ອງແບ່ງປັນຊ່ວຍເຫລືອຜູ້ອື່ນທີ່ຂາດເຂີນດ້ວຍ. ແລະການຊ່ວຍເຫລືອນັ້ນຕ້ອງທໍາດ້ວຍໃຈບໍຣິສຸດ ແລະໂດຍບໍ່ຫວັງຜົນຕອບແທນ. ດັ່ງນັ້ນເຮົາຈຶ່ງເຫັນອົງການຄຣິສຕຽນຫລວງຫລາຍໄດ້ອອກໄປຊ່ວຍຜູ້ຕົກທຸກໄດ້ຍາກຢູ່ໃນປະເທດຕ່າງໆ

ຄ. ສະລູບໄດ້ວ່າ ຄຣິສຕຽນຕ້ອງສະແດງຄວາມຮັກຂອງຕົນຕໍ່ຜູ້ອື່ນຢູ່ສເມີ ຄືການບອກໃຫ້ຄົນອື່ນຮູ້ຈັກທາງແຫ່ງຄວາມລອດພົ້ນຈາກບາບກັມຂອງຕົນ ແລະຊ່ວຍເຫລືອຄົນອື່ນໃນຍາມຕົກທຸກໄດ້ຍາກ ໂດຍບໍ່ຫວັງຜົນຕອບແທນໃດໆ.

3. **ຜູ້ທີ່ເຊື່ອຕ້ອງຮັກຊຶ່ງກັນແລະກັນເໝືອນດັ່ງພີ່ນ້ອງ**ຮ່ວມທ້ອງດຽວກັນ ເພາະທຸກຄົນໄດ້ເປັນລູກຂອງພຣະເຈົ້າແລ້ວ ແລະທຸກຄົນມີພຣະບິດາຜູ້ດຽວກັນຄືພຣະເຈົ້ານັ້ນເອງ.

ພຣະຄໍາພີໄດ້ຊົງສອນກ່ຽວກັບຄວາມຮັກດັ່ງນີ້:

1 ໂກຣິນໂທ 13 *“ເຖິງແມ່ນເຮົາເວົ້າພາສາແປກໆໄດ້ຈະເປັນພາສາມະນຸດຫລືເທວະດາກໍດີ ແຕ່ບໍ່ມີຄວາມຮັກເຮົາກໍເປັນເໝືອນຄ້ອງຫລືແຊ່ງທີ່ສົ່ງສຽງດັງອຶກກະທຶກເທົ່ານັ້ນ. ເຖິງແມ່ນເຮົາປະກາດພຣະທັມໄດ້, ແລະເຂົ້າໃຈຂໍ້ເລິກລັບທັງປວງ ແລະມີຄວາມຮູ້ທັ້ງສິ້ນ ແລະມີຄວາມເຊື່ອຢ່າງຄົບຖ້ວນພໍທີ່ຈະບອກພູເຄື່ອນທີ່ໄປໄດ້ ແຕ່ບໍ່ມີຄວາມຮັກເຮົາກໍບໍ່ມີຄ່າອັນໃດ. ເຖິງແມ່ນເຮົາຈະບໍຣິຈາກສິ່ງຂອງຈົນໝົດ, ຫລືສະຣະຕົວເຮົາໃຫ້ເຂົາເຜົາໄຟ ແຕ່ບໍ່ມີຄວາມຮັກເຮົາກໍບໍ່ໄດ້ປະໂຫຍດຫຍັງໝົດ. ຄວາມຮັກກໍອົດທົນດົນນານ ແລະຊອບໃນການເມດຕາກະຣຸນາ ຄວາມຮັກບໍ່ເຫິງສາ ບໍ່ອວດອ້າງ ບໍ່ຈອງຫອງ, ບໍ່ເຮັດການອັນບໍ່ສຸພາບ, ບໍ່ຄິດເຫັນແກ່ປະໂຫຍດສ່ວນຕົວແຕ່ຝ່າຍດຽວ, ບໍ່ມີໃຈຮ້າຍງ່າຍ, ບໍ່ຊອບຈົດຈໍາຄວາມຜິດ, ບໍ່ຍິນດີໃນການອະທັມ ແຕ່ຍິນດີໃນການສັດຈິງ. ຄວາມຮັກສູ້ທົນທຸກສິ່ງ ເຊື່ອທຸກສິ່ງໄວ້ວາງໃຈທຸກສິ່ງ, ແລະພຽນອົດທົນເອົາທຸກສິ່ງ”*

## ຂໍພຣະເຈົ້າອວຍພອນທ່ານ

*“ເພາະວ່າພຣະເຈົ້າຊົງຮັກໂລກ ຈຶ່ງໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ” ໂຢຮັນ 3:16*

*ຮຽບຮຽງຈາກໃບປິວແຫ່ງຄຣິສຕະຈັກລາວຂ່າວປະເສີດ*